**ມິຊຊາອາທິດທີ 17 ການົດທຳມະດາ ປີ B**

**ວັນທີ 25 ກໍລະກົດ 2021**



**ພຣະວໍລະສານໂດຍນັກບຸນຍວງ 6, 1-15**

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດຂ້າມທະເລກາລີເລອັນມີຊື່ວ່າທະເລຊາບຕີເບຣີອັດ. ຝູງຄົນຫລວງຫລາຍຕິດຕາມພຣະອົງໄປ ຍ້ອນວ່າໄດ້ເຫັນການອັດສະຈັນທີ່ພຣະອົງໄດ້ກະທຳ ເພື່ອປິ່ນປົວຄົນເຈັບປ່ວຍ. ພຣະອົງໄດ້ສະເດັດຂຶ້ນເທິງພູແລະປະທັບຢູ່ທີ່ນັ້ນພ້ອມກັບພວກລູກສິດຂອງພຣະອົງ. ເວລານັ້ນ ບຸນປາສກາອັນແມ່ນວັນສະຫລອງຂອງພວກຢູເດວກໍໃກ້ຈະມາເຖິງແລ້ວ. ພຣະເຢຊູເຈົ້າຊົງທອດພຣະເນດເຫັນປະຊາຊົນຫລວງຫລາຍມາຫາພຣະອົງດັ່ງນີ້ ຈຶ່ງກ່າວກັບຟີລິບວ່າ: ພວກເຮົາຈະຊື້ເຂົ້າຈີ່ຢູ່ໃສພໍໃຫ້ຄົນເຫລົ່ານີ້ໄດ້ກິນ? ພຣະອົງກ່າວດັ່ງນີ້ກໍເພື່ອລອງໃຈເພິ່ນ. ພຣະອົງເອງຮູ້ຈັກແລ້ວວ່າຈະຕ້ອງເຮັດແນວໃດ. ຟີລິບທູນຕອບວ່າ: ຊື້ເຂົ້າຈີ່ສອງຮ້ອຍຫລຽນກໍບໍ່ພໍເພື່ອແບ່ງໃຫ້ຜູ້ໜຶ່ງໄດ້ໜ້ອຍໜຶ່ງຊ້ຳ.

ສາວົກຜູ້ໜຶ່ງຊື່ອັນເດຣທີ່ເປັນນ້ອງຂອງຊີມອນເປໂຕທູນພຣະອົງວ່າ: ຢູ່ນີ້ມີເດັກນ້ອຍຜູ້ໜຶ່ງມີເຂົ້າຈີ່ຫ້າກ້ອນກັບປາສອງໂຕ ແຕ່ວ່າເທົ່ານີ້ຈະພໍຫຍັງສຳລັບຄົນຫລາຍປານນີ້?
ພຣະເຢຊູເຈົ້າເລີຍກ່າວວ່າ: ຈົ່ງບອກໃຫ້ພວກເຂົາເຈົ້ານັ່ງລົງ. ຢູ່ທີ່ນັ້ນມີຫຍ້າຫລາຍ. ພວກເຂົາໄດ້ພາກັນນັ່ງ, ນັບແຕ່ຜູ້ຊາຍມີປະມານຫ້າພັນຄົນ. ພຣະເຢຊູເຈົ້າຊົງຈັບເອົາເຂົ້າຈີ່, ຊົງຂອບພຣະຄຸນແລ້ວແຈກຢາຍໃຫ້ພວກທີ່ນັ່ງຢູ່ນັ້ນ. ສຳລັບປາພຣະອົງກໍກະທຳດັ່ງດຽວກັນ ຕາມຄວາມຕ້ອງການຂອງໃຜລາວ.

ເມື່ອທຸກຄົນໄດ້ກິນອີ່ມໝຳສຳລານແລ້ວ, ພຣະອົງກໍກ່າວກັບພວກລູກສິດວ່າ: ຈົ່ງເກັບເສດເຂົ້າຈີ່ທີ່ເຫລືອໄວ້ນັ້ນ ບໍ່ໃຫ້ມັນເສຍໄປຊື່ໆ. ພວກລູກສິດກໍໄດ້ພາກັນຮິບໂຮມເສດທີ່ເຫລືອຈາກເຂົ້າຈີ່ຫ້າກ້ອນໄວ້ໄດ້ສິບສອງກະຕ່າ. ຄົນທັງຫລາຍເຫັນອັດສະຈັນທີ່ພຣະເຢຊູເຈົ້າໄດ້ກະທຳເລີຍເວົ້າວ່າ: ທ່ານຜູ້ນີ້ແທ້ ແມ່ນປະພາສົກທີ່ຈະຕ້ອງມາໃນໂລກນີ້.

ເມື່ອພຣະເຢຊູເຈົ້າຮູ້ວ່າພວກເຂົາຈະຈັບເອົາພຣະອົງໄປແຕ່ງຕັ້ງເປັນກະສັດ ພຣະອົງເລີຍຜີກຕົວໜີຂຶ້ນພູແຕ່ຜູ້ດຽວອີກເທື່ອໜຶ່ງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢຮ 6, 1-15**

ວາຈາພຣະເຈົ້າວັນນີ້, ເລົ່າເຖິງເຫດການທີ່ພຣະເຢຊູເຈົ້າໄດ້ເຕົ້າໂຮມຝູງຊົນເປັນຈຳນວນຫລວງຫລາຍທີ່ຕິດຕາມພຣະອົງມາ. ຍ້ອນພວກເຂົາໄດ້ຟັງຄຳເທດສອນຂອງພຣະອົງແລະໄດ້ເຫັນການອັດສະຈັນຫລາຍຢ່າງຊຶ່ງພຣະເຢຊູເຈົ້າຊົງກະທຳ. ແລະພິເສດໄປກວ່ານັ້ນ, ວັນນີ້ພຣະເຢຊູເຈົ້າມີຄວາມເວດທະນາສົງສານແລະປາດຖະໜາຢາກລ້ຽງເກືອຝູງຊົນທັງໝົດ.

ຮູບພາບທີ່ພຣະເຢຊູເຈົ້າລ້ຽງເກືອຝູງຊົນວັນນີ້, ເປັນຮູບພາບຂອງມະຫາບູຊາມິຊຊາ. ທຸກຄັ້ງທີ່ພວກເຮົາມາຮ່ວມຖະຫວາຍມິຊຊາບູຊາ, ແມ່ນພຣະເຢຊູເຈົ້າເອງເປັນຜູ້ເຕົ້າໂຮມແລະລ້ຽງເກືອພວກເຮົາ. ພຣະອົງບໍ່ໄດ້ລ້ຽງເກືອພວກເຮົາດ້ວຍເຂົ້າຈີ່ຫ້າກ້ອນແລະປາສອງໂຕ, ແຕ່ພຣະອົງລ້ຽງເກືອພວກເຮົາດ້ວຍພຣະກາຍແລະພຣະໂລຫິດຂອງພຣະອົງ. ເພາະພຣະກາຍຂອງພຣະອົງເປັນອາຫານແທ້. ແລະໂລຫິດຂອງພຣະອົງເປັນເຄື່ອງດື່ມແທ້ທີ່ປະທານຊີວິດນິລັນດອນໃຫ້ພວກເຮົາ.

ທຸກຄັ້ງທີ່ພວກເຮົາມາຮ່ວມມະຫາບູຊາມິຊຊາ, ພວກເຮົາມາຫາພຣະອົງດ້ວຍສະພາບຊີວິດທີ່ອ່ອນແອແລະຕ່ຳນ້ອຍຂອງພວກເຮົາ. ດ້ວຍຄວາມກັງວົນ, ຄວາມຍາກລຳບາກ ແຕ່ພຣະອົງຈະຜັນປ່ຽນສິ່ງທີ່ພວກເຮົາມີແລະພວກເຮົາເປັນໃຫ້ເປັນສິ່ງສວຍງາມແລະຊອບພຣະໄທພຣະອົງ. ເໝືອນດັ່ງພຣະອົງໄດ້ທະວີສິ່ງນ້ອຍນິດອັນແມ່ນເຂົ້າຈີ່ຫ້າກ້ອນແລະປາສອງໂຕເພື່ອລ້ຽງເກືອຝູງຊົນເປັນຈຳນວນຫລວງຫລາຍ. ແຕ່ສິ່ງທີ່ພຣະເຢຊູເຈົ້າລໍຖ້ານຳພວກເຮົາຄືໃຫ້ພວກເຮົາເປີດໃຈແລະມອບຖະຫວາຍທຸກສິ່ງຢ່າງໃຫ້ພຣະອົງ. ເພື່ອພຣະຄຸນຂອງພຣະອົງຈະໄດ້ທຳງານໃນຕົວຂອງພວກເຮົາແຕ່ລະຄົນ.

**ພາວະນາ**

ໂອພຣະເຢຊູເຈົ້າ, ຂໍໃຫ້ວາຈາຂອງພຣະອົງວັນນີ້ຊ່ວຍລູກໃຫ້ຮູ້ຈັກເຊື່ອແລະໄວ້ໃຈໃນພຣະອົງ, ຜູ້ຊົງຮັກແລະລ້ຽງເກືອລູກດ້ວຍພຣະກາຍແລະພຣະໂລຫິດຂອງພຣະອົງ. ເພື່ອລູກຈະໄດ້ມີຊີວິດແລະແມ່ນຊີວິດທີ່ເກີດດອກອອກຜົນແລະໝັ້ນຄົງຖາວອນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ